# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການສານແອບເຂົ້າ

(ສະບັບທົດລອງ)

ຂຽນໂດຍ : ອ.ຈ. ທອງສີ ປັນຍາສຸກ

ຂໍ້ມູນຈາກ : ບ້ານ ກາງ  ເມືອງ ພຽງ  ແຂວງ ໄຊຍະບູລີ

ປີ 2007

PDF created with pdfFactory Pro trial version www.pdffactory.com

## ຮູບແລະປະຫວັດຂອງຜູ້ຂຽນ

ຊື່

ອາຍຸ

ອາຊີບ

**ເຫດຜົນຂອງການຂຽນປຶ້ມຫົວນີ້**

ເພື່ອຢາກໃຫ້ທຸກຄົນໄດ້ຮູ້ຈັກການສານຕິບເຂົ້າເພື່ອນຳໄປເຮັດແລະນຳໃຊ້ໃນຄອບຄົວ ຫຼື ຈະເຮັດເປັນສິນຄ້າເພື່ອເສີມລາຍໄດ້ໃຫ້ຄອບຄົວເຮັດໃຫ້ເສດຖະກິດຂອງຄອບຄົວດີຂື້ນ.

PDF created with pdfFactory Pro trial version www.pdffactory.com

### ເພງ: ແອບເຂົ້າ

| | |
|---|---|
| ແອບເຂົ້າລາວ | ຮຽນໄດ້ງ່າຍໆ |
| ຮັກສາໄວ້ | ມູນເຊື້ອພໍ່ເຮົາ |
| ຂໍເຊີນຊວນ | ນ້ອຍໜຸ່ມບ່າວສາວ (2) |
| ໃຊ້ແອບເຂົ້າລາວ | ໃຫ້ຍືນຍົງຕະຫຼອດໄປ. |

### **ລຳຕັ່ງຫວາຍ**

| | |
|---|---|
| ນາງເອີຍ | ໃຫ້ນ້ອງມາຮຽນຮູ້ |
| ພູມປັນຍາ | ລະວ່າທ້ອງຖິ່ນ |
| ເປັນຄວາມດີ | ນໍ້ ແມ່ນແທ້ໆ |
| ບໍ່ແປປີ້ນ | ແມ່ນປ່ຽນໄປ |
| ອີ່ຫຼີໃດ | ຄືນງາມນາ |
| ອັນວ່າແອບເຂົ້ານີ້ | ເປັນຂອງດີແມ່ນມີຄ່າ |
| ຂໍໃຫ້ນາງນໍລະນ້ອງຫຼ້າ | ຢ່າໄລອ້າຍຜູ້ນັ່ງສານ |
| ອີ່ຫຼີໃດຄືນງາມເອີຍ | ໂອຄືນງາມເອີຍ. |

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ
# "ການສານແອບເຂົ້າ"

ແຕ້ມໂດຍ :
ຮັບໂຮມ ແລະຈັດໜ້າໂດຍ : ທ້າວ ສິດອາພອນ ດວງປະສິດ
ຜູ້ຮຽບຮຽງ : ອ.ຈ. ໂພໄຊ ຈັນທະວົງສາ
ອ.ຈ. ລັ່ງ ແສງດາລາ
ເຈົ້າຂອງ: ຫ້ອງການສຶກສາເມືອງ ພຽງ ແຂວງ ໄຊຍະບູລີ
ແລະສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ໄດ້ບັນຈຸເອົາເນື້ອໃນ, ຂັ້ນຕອນການປະຕິບັດຕ່າງໆລວມທັງຄຸນປະໂຫຍດຂອງການໃສ່ເບັດກັບທ້ອງຖິ່ນບ້ານ. ນາປາ ເມືອງ ຄຳ. ແຂວງຊຽງຂວາງໂດຍແມ່ນຄູເຝິກຊຸມຊົນເປັນຜູ້ໃຫ້ຂໍ້ມູນ ແລະຂຽນດ້ວຍຕົນເອງໂດຍຜ່ານການຮັບຮອງແລະຮຽບຮຽງຈາກຫ້ອງການສຶກສາປະຈຳເມືອງ. ພະແນກສຶກສາປະຈຳແຂວງ,ສູນອົບຮົມຮ່ວມພັດທະນາ, ກົມພາລະ ແລະສິລະປະສຶກສາ (ກະຊວງສຶກສາທິການ).

ປຶ້ມເຫຼັ້ມນີ້ຄະນະຈັດທຳມີຈຸດປະສົງແນະນຳ ແລະຈັດທຳຂຶ້ນເພື່ອເປັນຄູ່ມື ແລະເປັນບ່ອນອີງໃຫ້ແກ່ຄູອາຈານໃນການສິດສອນວິຊາພູມປັນຍາທ້ອງ ຖິ່ນ, ດັ່ງນັ້ນຄູຕ້ອງເລືອກຫົວຂໍ້ທີ່ເໝາະສົມກັບໄວອາຍຸຂອງເດັກໃນແຕ່ລະຂັ້ນ ຮຽນໂດຍອີງຕາມສະມັດຕະພາບຂອງບົດສອນເຊິ່ງໄດ້ລະບຸໄວ້ໃນແຜນການ ສອນປະຈຳປີ, ປະຈຳເດືອນ ແລະ ປະຈຳອາທິດ,ເຖິງຢ່າງໃດກໍຕາມຄູຕ້ອງ ໄດ້ເອົາໃສ່ຕື່ມໃນການເອົາຄວາມຮູ້ທ້ອງຖິ່ນເຂົ້າມາສິດສອນເພື່ອເຮັດໃຫ້ເນື້ອ ໃນຂອງຂະບວນການຮຽນຮູ້ຂອງເດັກນ້ອຍມີຄວາມສົມບູນແລະມີຄວາມສອດ ຄ່ອງກັບຄວາມເປັນຈິງຫຼາຍຂຶ້ນ.

ຄະນະຈັດທຳປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ຄິດວ່າເນື້ອໃນຍັງມີຫຼາຍອັນທີ່ຍັງບໍ່ທັນສົມບູນ, ຄົບຖ້ວນແລະຂາດຫາຍໄປພວກເຮົາຫວັງຢ່າງຍິ່ງວ່າຄົງຈະໄດ້ຮັບຄຳຕຳນິຕິຊົມຈາກຄູ-ອາຈານຜູ້ທີ່ຊົມໃຊ້ທຸກທ່ານ,ພວກເຮົາ ພ້ອມແລ້ວທີ່ຈະປັບປຸງປຶ້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ໃຫ້ສົມບູນຂຶ້ນແລະ ຂໍຂອບໃຈລ່ວງໜ້າກ່ຽວກັບຄຳຕຳນິຕິຊົມຂອງທ່ານທີ່ມີຕໍ່ພວກເຮົາ.

ຄະນະຈັດທຳ

## ກາບ: ສືບແທນ

ແອບເຂົ້ານີ້ ຂໍມອບໃຫ້ນາງ
ໃຫ້ຄຶງບາງຫວງຮັກ ດັ່ງດວງຕາແກ້ວ
ມັນເປັນແວວ ຮຸ້ນພໍ່ສ້າງໃຫ້
ບໍ່ສືບໄວ້ ເມື່ອໜ້າຈະຫາຍ
ຄົນທັງຫຼາຍ ໃຜເຫັນກໍຍ້ອງ
ປະຊາຕ້ອງ ຄວນສ້າງສືບແທນ

## ເຊີ້ງ: ຮຽນສານ

**ໂຮ............ຮິວ**

ມາເຮົາມາ ມາເຮົາມາ
ຮ່ວມພັດທະນາ ສີມືຄືນໃໝ່
ຕ້ອງສານໃຫ້ໄດ້ ແອບເຂົ້າຂອງລາວ
ນ້ອຍໜຸ່ມຍິງສາວ ລາວທຸກທົ່ວໜ້າ
ຮຽນພູມປັນຍາ ຂອງຄົນຮຸ້ນເກົ່າ
ຂໍໃຫ້ພວກເຈົ້າ ຫຼານນ້ອຍຈື່ເອົາ
ເອົາລະວະ ອາວລະເວີຍ

PDF created with pdfFactory Pro trial version www.pdffactory.com

ແລ້ວເອົາຫວາຍມາແທກກັບໜ່ວຍແອບເຂົ້າ  ແລ້ວເອົາຫວາຍນັ້ນມາເຫຼົາ

ເອົາເຫຼັກຊີມາແທງຍິບເສັ້ນຫວາຍຕິດເຂົ້າກັນ

ຈາກນັ້ນກໍເອົາຫວາຍມາກ້ຽວເປັນວົງມົນຢູ່ໜ້າແລະກ້ຽວເປັນວົງມົນ ເພິ່ນເອີ້ນວ່າກຽນລອຍທັງໂຕແອບເຂົ້າແລະຝາແອບເຂົ້າ

ຈາກນັ້ນກໍເອົາມາສຸບເຂົ້າກັນກໍໄດ້ໜ່ວຍແອບເຂົ້າ

**ຄວາມເປັນມາ**

ລາວເຮົາແຕ່ສະໄໝກ່ອນແມ່ນໄດ້ມີການດຳລົງຊີວິດໂດຍອາໃສທຳມະຊາດເປັນຫຼັກໂດຍສະເພາະແມ່ນການຈັກສານເປັນຕົ້ນ  ແລະອີກສິ່ງໜຶ່ງທີ່ເຮົາຈຳຕ້ອງເຮັດຢູ່ປະຈຳກໍຄືການສານແອບເຂົ້າເພື່ອເອົາໄວ້ໃສ່ເຂົ້າເວລາວິແລ້ວ  ແລະຍັງເປັນເຄື່ອງມືທີ່ເຮັດໄດ້ງ່າຍບໍ່ຕ້ອງລົງທຶນຫຍັງເລີຍ.

**ອຸປະກອນ**

1. ມີດ ຫຼື ພ້າ
2. ໄມ້ປ່ອງ
3. ຫວາຍ
4. ເລັກຊີນ້ອຍ

PDF created with pdfFactory Pro trial version www.pdffactory.com

**ວິທີການເຮັດ**

ໄປຕັດເອົາໄມ້ປ່ອງມາສິນເປັນປ້ອງດຽວ

ນຳເອົາມາຂູດຕົວອອກແລ້ວຈັກເປັນເສັ້ນຕອກ

ເຫຼົາໃຫ້ກ້ຽງງາມ ຈາກນັ້ນກໍສານເປັນລາຍສອງຫຼືລາຍສາມກໍໄດ້

ສານໃຫຍ່ນ້ອຍຕາມຄວາມຕ້ອງການແລ້ວກໍເອົາສອງສົ້ນມາຈອດເຂົ້າກັນໃຫ້ເປັນວົງມົນ

ຈາກນັ້ນກໍເລີ່ມສານເທື່ອລະສົ້ນຈະເຮັດເປັນລາຍຫຍັງກໍໄດ້

ສານຕາມໃຈມັກແອບນ້ອຍແອບໃຫຍ່ເມື່ອໄດ້ແລ້ວກໍມ້ວນປາກ

ການມ້ວນຕ້ອງມ້ວນທັງສອງສົ້ນແລ້ວກໍຫັກສົ້ນໜຶ່ງເຂົ້າໃຈກາງເປັນສອງຊັ້ນໃຫ້ໄດ້ຄູ່ໜຶ່ງຄືກັນ (ໝາຍຄວາມວ່າອັນໜຶ່ງເປັນໂຕແອບອັນໜຶ່ງແມ່ນຝາແອບ)

ຈາກນັ້ນກໍສານເປັນຕາແລ້ວຊ້ອນຕອກສານເຂົ້າທາງໃນໃຫ້ເປັນລາຍຂັດ

PDF created with pdfFactory Pro trial version www.pdffactory.com